ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----===000===-----

**ທະນາຄານແຫ່ງ ສປປ ລາວ**

ໜ່ວຍງານຂໍ້ມູນຕ້ານການຟອກເງິນ ເລກທີ 216 /ໜຕຟງ

ນະຄອນຫຼວງວຽງຈັນ, ວັນທີ 17 ກັນຍາ 2008

# ແຈ້ງການ

ເຖິງ: ບັນດາທະນາຄານທຸລະກິດລັດ, ຫຸ້ນສ່ວນ, ເອກະຊົນ, ແລະ ສາຂາຕ່າງປະເທດ.

*ເລື່ອງ:* ແຈ້ງການຈັດຕັ້ງປະຕິບັດ **" ຄໍາແນະນໍາກ່ຽວກັບຂັ້ນຕອນການຄຸ້ມຄອງການດໍາເນີນງານເພື່ອຕ້ານການຟອກເງິນຂອງສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ".**

- ອີງຕາມຂໍ້ຕົກລົງຂອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ສະບັບເລັກທີ 229/ທຫລ ລົງວັນທີ 14 ພຶດສະພາ 2007.
- ອີງຕາມຄໍາແນະນໍາກ່ຽວກັບຂັ້ນຕອນການຄຸ້ມຄອງການດໍາເນີນງານເພື່ອຕ້ານການຟອກເງິນຂອງສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ສະບັບເລກທີ 02/ທຫລ ລົງວັນທີ 16 ກັນຍາ 2008.

ໜ່ວຍງານຂໍ້ມູນຕ້ານການຟອກເງິນ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າເພື່ອຈັດຕັ້ງປະຕິບັດຄໍາແນະນໍາກ່ຽວກັບຂັ້ນຕອນການຄຸ້ມຄອງການດໍາເນີນງານເພື່ອຕ້ານການຟອກເງິນ ຂອງສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ໃຫ້ຖືກຕ້ອງ ແລະ ເປັນເອກະພາບ, ໜ່ວຍງານ AMLIU ຈິ່ງແຈ້ງມາຍັງທ່ານເພື່ອເອົາໃຈໃສ່ບາງບັນຫາດັ່ງລຸ່ມນີ້:

1. ໃຫ້ແຕ່ງຕັ້ງ CO ຄືນໃໝ່ໂດຍໃຫ້ສອດຄ່ອງກັບເງື່ອນໄຂທີ່ໄດ້ກໍານົດໄວ້ໃນມາດຕາ 4 ຂອງຄໍາແນະນໍາ ແລ້ວແຈ້ງລາຍຊື່ມາຍັງໜ່ວຍງານຂໍ້ມູນຕ້ານການຟອກເງິນ.
2. ໃຫ້ຈັດຕັ້ງເຜີຍແຜ່ຄໍາແນະນໍາດັ່ງກ່າວໃຫ້ພະນັກງານທຸກຄົນຮັບຮູ້ໂດຍສະເພາະພະນັກງານ Tellers ທີ່ເຮັດໜ້າທີ່ພົວພັນກັບລູກຄ້າໂດຍກົງ.
3. ໃຊ້ປ່ຽນແທນຂໍ້ກໍານົດການເກັບກໍາຂໍ້ມູນ ແລະ ການລາຍງານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 11/ທຫລ ລົງວັນທີ 30 ສິງຫາ 2008 ແລະ ແຈ້ງການກ່ຽວກັບການແຕ່ງຕັ້ງລະບະຮັບຜິດຊອບຕິດຕາມ ແລະ ເກັບກໍາຂໍ້ມູນການເຄື່ອນໄຫວທາງດ້ານການເງິນທີ່ເຫັນວ່າເປັນໜ້າສົງໄສເປັນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເລກທີ 211/ທຫລ ລົງວັນທີ 05 ກັນຍາ 2005.

ສຳລັບການແຕ່ງຕັ້ງເຈົ້າໜ້າທີ່ເກັບກຳຂໍ້ມູນ ແລະ ກວດກາ (CO) ຄືນໃໝ່ນີ້ ສະເໜີໃຫ້ທະນາຄານຈັດຕັ້ງປະຕິບັດຕາມ **ມາດຕາ 4 ຂອງຄຳແນະນຳສະບັບເລກທີ 02/ທຫລ ລົງວັນທີ 16 ກັນຍາ 2008 ( ຂັ້ນສຳນັກງານໃຫຍ່ ແລະ ຂັ້ນສາຂາ )** ພ້ອມທັງແຈ້ງຕອບການແຕ່ງຕັ້ງເຈົ້າໜ້າທີ່ (CO) ພາຍວັນທີ 26 ກັນຍາ 2008 ໂດຍສົ່ງໃຫ້ຈຸງານຄຸ້ມຄອງ ແລະ ກວດກາຂອງໜ່ວຍງານຂໍ້ມູນຕ້ານການຟອກເງິນ (AMLIU).

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານເພື່ອຈັດຕັ້ງປະຕິບັດຕາມທາງຄວນດ້ວຍ.

ດ້ວຍຄວາມນັບຖື,

ຫົວໜ້າໜ່ວຍງານຂໍ້ມູນຕ້ານການຟອກເງິນ,

ເລືອນ ວົງພຣະນະຄອນ

ເອກະສານຄັດຕິດ:

- ຄຳແນະນຳກ່ຽວກັບຂັ້ນຕອນການຄຸ້ມຄອງການດຳເນີນງານເພື່ອຕ້ານການຟອກເງິນຂອງສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ.